ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ກະຊວງໂຍທາທິການ ແລະ ຂົນສົ່ງ

## ໂຄງການພັດທະນາເສດຖະກິດພາກເໜືອ ເພື່ອການເຊື່ອມຈອດເຊື່ອມໂຍງ ພາກພື້ນ ຂອງ ສປປ ລາວ (P176088)

# ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)

ກະກຽມໂດຍ: ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ (EDPD)

ສະຖາບັນຄົ້ນຄວ້າໂຍທາທິການ ແລະຂົນສົ່ງ (PTRI)

(ສະບັບຮ່າງ) 05 ພະຈິກ 2021

**ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP)**

1. ກະຊວງໂຍທາທິການ ແລະ ຂົນສົ່ງ (MPWT) ໂດຍຜ່ານກົມແຜນການ ແລະ ການຮ່ວມມື (DPC) ກຳລັງຈັດຕັ້ງປະຕິບັດໂຄງການພັດທະນາເສດຖະກິດພາກເໜືອເພື່ອການເຊື່ອມຈອດເຊື່ອມໂຍງພາກພື້ນ ຂອງ ສປປ ລາວ (NLRECC Project) ("ໂຄງການ") ໂດຍມີການມີສ່ວນຮ່ວມຂອງຂະແໜງການດັ່ງຕໍ່ໄປນີ້. ປະກອບມີ: (ກ) ກະຊວງກະສິກຳ ແລະ ປ່າໄມ້ (MAF), ເຊິ່ງຈະຮັບຜິດຊອບໃນການພັດທະນາຄວາມອາດສາມາດດ້ານອົງການ ແລະ ການດຳເນີນງານໃນການອຳນວຍຄວາມສະດວກທາງດ້ານການຄ້າກະສິກຳ; (ຂ) ກົມພາສີພາຍໃຕ້ກະຊວງການເງິນ ແລະ ກົມການນຳເຂົ້າ ແລະ ສົ່ງອອກພາຍໃຕ້ກະຊວງອຸດສາຫະກຳ ແລະການຄ້າ, ຮັບຜິດຊອບຈັດຕັ້ງປະຕິບັດວຽກງານການອຳນວຍຄວາມສະດວກດ້ານພາສີ ແລະ ການຄ້າຜ່ານຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ (NTFC) ແລະ ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າຂັ້ນແຂວງ (PTFC); (ຄ) ກະຊວງປ້ອງກັນຄວາມສະຫງົບ (MoPS), ເຊິ່ງຈະຮັບຜິດຊອບວຽກງານຄຸ້ມຄອງ ແລະ ຮັກສາຄວາມປອດໄພຕາມຊາຍແດນ, ຄົນເຂົ້າເມືອງ ແລະ ດ່ານຊາຍແດນ ແລະ ອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ ເຊິ່ງຈະເຂົ້າຮ່ວມໃນການປັບປຸງ ແລະ ບູລະນະຮັກສາເສັ້ນທາງ, ພັດທະນາທ່າບົກສາງສິນຄ້າ, ດ່ານຊາຍແດນ. ການຄຸ້ມຄອງສິ່ງອຳນວຍຄວາມສະດວກຊາຍແດນ, ການຄຸ້ມຄອງການລົງທຶນຂອງພາກເອກະຊົນ, ແລະ ຮັບປະກັນຄວາມສອດຄ່ອງລະຫວ່າງລະບຽບການຂອງ ສປປ ລາວ ແລະການປະຕິບັດຂັ້ນທ້ອງຖິ່ນຂອງການດຳເນີນງານຕາມສະຖານທີ່ຊາຍແດນ. ນອກຈາກນັ້ນ, ສະຫະພັນແມ່ຍິງລາວ ແລະ ຄະນະກຳມະການເພື່ອຄວາມກ້າວໜ້າຂອງແມ່ຍິງໃນອົງການທີ່ກ່ຽວຂ້ອງ ຈະມີສ່ວນຮ່ວມໃນກິດຈະກຳທີ່ກ່ຽວຂ້ອງກັບການພັດທະນາບົດບາດຍິງຊາຍ. ນອກຈາກນັ້ນ, ພາກເອກະຊົນຈະມີສ່ວນຮ່ວມໃນການປະຕິບັດບາງດ່ານຂອງທ່າບົກ ແລະ ການພັດທະນາການຂົນສົ່ງ, ແລະ ວຽກງານປັບປຸງເສັ້ນທາງ, ພາຍໃຕ້ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP) ໂດຍການໃຊ້ສັນຍາອີງຕາມຜົນການເຮັດວຽກ ແລະ ປະສິດທິພາບ (OPBRC). ທະນາຄານໂລກກຳລັງຈະສະໜອງເງິນທຶນສຳລັບໂຄງການ.

2. ກະຊວງ ຍທຂ (MPWT) ຈະປະຕິບັດ ແລະ ມາດຕະການທາງດ້ານວັດຖຸ ເພື່ອໃຫ້ໂຄງການຖືກຈັດຕັ້ງປະຕິບັດຕາມມາດຕະຖານສິ່ງແວດລ້ອມ ແລະ ສັງຄົມ (ESSs). ແຜນການພັນທະສັນຍາດ້ານສິ່ງແວດລ້ອມ ແລະສັງຄົມ (ESCP) ນີ້ກຳນົດມາດຕະການ ແລະ ການກະທຳ, ເອກະສານສະເພາະໃດໜຶ່ງ ຫຼື ແຜນການ, ພ້ອມທັງກຳນົດເວລາປະຕິບັດ.

3. ກະຊວງ ຍທຂ (MPWT) ຍັງຈະປະຕິບັດຕາມຂໍ້ກຳນົດຂອງເອກະສານສິ່ງແວດລ້ອມ ແລະ ສັງຄົມ (E&S) ອື່ນໆທີ່ຕ້ອງການພາຍໃຕ້ຮ່າງກອບໜ້າວຽກສິ່ງແວດລ້ອມ ແລະ ສັງຄົມ (ESF) ແລະ ອ້າງອີງໃນ (ESCP) ນີ້, ເຊັ່ນ: ຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະສັງຄົມ (ESMF), ຮ່າງກອບໜ້າວຽກນະໂຍບາຍຍົກຍ້າຍ (RPF), ຮ່າງກອບໜ້າວຽກການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEF), ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (SEP), ແລະ ແຜນການທີ່ກ່ຽວຂ້ອງທີ່ຖືກກະກຽມ (ESMPs, RAPs, EGEPs) ແລະ ກຳນົດເວລາທີ່ກຳນົດໄວ້ໃນເອກະສານສິ່ງແວດລ້ອມ ແລະ ສັງຄົມ (E&S).

4. ກະຊວງ ຍທຂ (MPWT) ມີຄວາມຮັບຜິດຊອບຕໍ່ການປະຕິບັດຕາມຂໍ້ກຳນົດທັງໝົດຂອງ ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ເຖິງແມ່ນວ່າການຈັດຕັ້ງປະຕິບັດມາດຕະການ ແລະ ການດຳເນີນການສະເພາະແມ່ນດຳເນີນໂດຍກະຊວງ, ອົງການ ຫຼື ໜ່ວຍງານທີ່ອ້າງອີງໃນ ວັກທີ່ 1 ຂ້າງເທິງ.

5. ການຈັດຕັ້ງປະຕິບັດມາດຕະການ ແລະ ການກະທຳທີ່ກຳນົດໄວ້ໃນ ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ນີ້ ຈະຖືກຕິດຕາມ ແລະ ລາຍງານຕໍ່ທະນາຄານໂລກ ໂດຍແມ່ນ ກະຊວງ ຍທຂ (MPWT) ຕາມທີ່ ESCP ກຳນົດໄວ້ ແລະ ເງື່ອນໄຂຂອງຂໍ້ຕົກລົງທາງກົດໝາຍ, ແລະ ທະນາຄານໂລກ ຈະຕິດຕາມ ແລະ ປະເມີນຄວາມຄືບໜ້າ ແລະ ການເຮັດສຳເລັດເອກະສານ, ມາດຕະການ ແລະ ການກະທຳໃນໄລຍະການປະຕິບັດໂຄງການ.

6. ຕາມການຕົກລົງ ເຫັນດີ ຂອງທະນາຄານໂລກ ແລະ ກະຊວງ ຍທຂ (MPWT) ແຜນ ESCP ນີ້ອາດຈະຖືກປັບປຸງເປັນເທື່ອລະກ້າວໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ເພື່ອສະແດງເຖິງການປັບຕົວຂອງການຄຸ້ມຄອງ ການປ່ຽນ

ແປງໂຄງການ ແລະ ສະຖານະການທີ່ບໍ່ໄດ້ຄາດຄິດ ຫຼື ເປັນການຕອບສະໜອງຕໍ່ການປະເມີນການປະຕິບັດ ໂຄງການທີ່ດຳເນີນພາຍໃຕ້.

ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ເອງ ໃນສະຖານະການດັ່ງກ່າວ, ກະຊວງ ຍທຂ (MPWT) ຈະຕົກລົງເຫັນດີກັບການປ່ຽນແປງກັບທະນາຄານໂລກ ແລະ ຈະປັບປຸງ ESCP ເພື່ອສະແດງເຖິງການປ່ຽນແປງດັ່ງກ່າວ. ຂໍ້ຕົກລົງກ່ຽວກັບການປ່ຽນແປງຂອງ ESCP ຈະຖືກບັນທຶກໄວ້ໂດຍຜ່ານການແລກປ່ຽນຈົດໝາຍທີ່ລົງນາມລະຫວ່າງທະນາຄານໂລກ ແລະກະຊວງ ຍທຂ (MPWT). ກະຊວງ ຍທຂ (MPWT) ຈະເປີດເຜີຍ ESCP ສະບັບປັບປຸງທັນທີ.

7. ພະແນກຄົ້ນຄ້ວາສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ, ສະຖາບັນຄົ້ນ ຍທຂ (EDPD/PTRI) ຍັງຈະເຮັດວຽກຢ່າງໃກ້ຊິດກັບກະຊວງອື່ນໆ ໃນການຈັດຕັ້ງປະຕິບັດ ເພື່ອຮັບປະກັນການປະຕິບັດ ແລະ ການຕິດຕາມ ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ຢ່າງຖືກຕ້ອງ.

8. ເມື່ອໂຄງການມີການປ່ຽນແປງ, ສະຖານະການທີ່ບໍ່ໄດ້ຄາດຄິດ ຫຼື ການດຳເນີນ ຂອງໂຄງການເຮັດໃຫ້ມີການປ່ຽນແປງຈົນສິ່ງຜົນຄວາມສ່ຽງ ແລະ ຜົນກະທົບໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ, ກະຊວງ ຍທຂ (MPWT) ຈະຕ້ອງສະໜອງທຶນເພີ້ມຕື່ມ, ຖ້າຕ້ອງການ, ເພື່ອຈັດຕັ້ງປະຕິບັດ ແລະ ມາດຕະການແກ້ໄຂຄວາມສ່ຽງ ແລະ ຜົນກະທົບ ດັ່ງກ່າວ, ເຊິ່ງອາດລວມເຖິງສິ່ງແວດລ້ອມ, ຜົນກະທົບດ້ານສຸຂະພາບ, ແລະ ຄວາມປອດໄພ, ການລັ່ງໄຫຼເຂົ້າຂອງແຮງງານກຳມະກອນ ແລະ ການຄອບຄອງທີ່ດິນ ທີ່ມີການປ່ຽນແປງ.

| | สะ... | | |
|---|---|---|---|
| | **ສະຫຼຸບຂອງການຈັດຕັ້ງປະຕິບັດ, ມາດຕະການ ແລະ ເຄື່ອງມືນຳໃຊ້ ເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ອາດຈະເກີດຂຶ້ນຈາກໂຄງການ** | **ໄລຍະເວລາ** | **ໜ່ວຍງານທີ່ຮັບຜິດຊອບ / ມີສິດອຳນາດ** |
| **ການຕິດຕາມ ແລະ ການລາຍງານ** | | | |
| **ກ** | **ລາຍງານປົກກະຕິ**<br><br>• ເປັນສ່ວນໜຶ່ງຂອງການລາຍງານໂຄງການປົກກະຕິ, ກະກຽມ ແລະ ສົ່ງລາຍງານການຕິດຕາມກວດກາເປັນປົກກະຕິ ໃຫ້ທະນາຄານກ່ຽວກັບການປະຕິບັດວຽກງານດ້ານສິ່ງແວດລ້ອມ, ສັງຄົມ, ສຸຂະພາບ ແລະ ຄວາມປອດໄພ (ESHS) ຂອງໂຄງການ, ລວມທັງວຽກ ທີ່ບໍ່ໄດ້ລະບຸການຈັດຕັ້ງປະຕິບັດໃນ ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP), ສະຖານະການກະກຽມ ແລະ ການປະຕິບັດເອກະສານວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S) ທີ່ຕ້ອງການພາຍໃຕ້ ເງື່ອນໄຂ ຂອງ (ESCP), ກິດຈະກໍາການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຕ່າງໆ, ການເຮັດວຽກຂອງກົນໄກການແກ້ໄຂຄໍາຮ້ອງທຸກ (GRM). | ລາຍງານປະຈໍາໄຕມາດ, ແລະ ຕະຫຼອດການຈັດຕັ້ງປະຕິບັດໂຄງການ.<br><br>ບົດລາຍງານຄວາມຄືບໜ້າປະຈໍາປີ, ແລະ ຕະຫຼອດການຈັດຕັ້ງປະຕິບັດໂຄງການ. | ສະຖາບັນຄົ້ນຄວ້າ ຍທຂ ຂອງກະຊວງ ຍທຂ<br><br>(PTRI of MPWT) |

| | | | |
|---|---|---|---|
| ຂ | **ເຫດການ ແລະ ອຸປະຕິເຫດ**<br>• ກະກຽມ ແລະ ປະຕິບັດກົນໄກການລາຍງານຂອງເຫດການຕ່າງໆ<br>• ແຈ້ງໃຫ້ທະນາຄານໂລກຮັບຊາບໂດຍດ່ວນກ່ຽວກັບເຫດການ ຫຼື ອຸບັດເຫດທີ່ກ່ຽວຂ້ອງກັບໂຄງການທີ່ມີ ຫຼື ອາດຈະສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ, ຊຸມຊົນທີ່ຖືກກະທົບ, ປະຊາຊົນ ຫຼື ແຮງງານກຳມະກອນ ລວມທັງອຸປະຕິເຫດການສັນຈອນຕາມເສັ້ນທາງຂອງໂຄງການ ແລະ ອື່ນໆ, ເຫດການທີ່ເກີດຂຶ້ນໃນສະຖານທີ່ກໍ່ສ້າງໂຄງການ ຫຼື ທີ່ກ່ຽວຂ້ອງກັບວຽກງານເຕັກນິກການກໍ່ສ້າງ ທີ່ໄດ້ຮັບທຶນຈາກທະນາຄານໂລກ ຂອງໂຄງການ.<br>• ໃຫ້ລາຍລະອຽດພຽງພໍກ່ຽວກັບເຫດການ ຫຼື ອຸບັດເຫດ, ສະແດງອອກ ພ້ອມຊີ້ບອກມາດຕະການແກ້ໄຂທັນທີທັນໃດ ຫຼື ແຜນການທີ່ຈະປະຕິບັດເພື່ອແກ້ໄຂ, ແລະ ຂໍ້ມູນໃດໆທີ່ສະໜອງໃຫ້ໂດຍຜູ້ຮັບເໝົາການກໍ່ສ້າງ ແລະ ໜ່ວຍງານທີ່ຄວບຄຸມ, ຕາມຄວາມເໝາະສົມ. ຕໍ່ຈາກນັ້ນ, ອີງຕາມການຮຽກຮ້ອງຂອງທະນາຄານໂລກ, ຕ້ອງໄດ້ກະກຽມບົດລາຍງານກ່ຽວກັບເຫດການ ຫຼື ອຸປະຕິເຫດ ແລະ ສະເໜີບັນດາມາດຕະການເພື່ອແກ້ໄຂ, ປ້ອງກັນບໍ່ໃຫ້ເກີດຂຶ້ນອີກ. ເບິ່ງຄືນລະອຽດແຈ້ງການກ່ຽວກັບເງື່ອນໄຂດ້ານສຸຂະພາບ ແລະ ຄວາມປອດໄພໃນການປະຕິບັດວຽກງານ (OHS) ໃນຂັ້ນຕອນການຄຸ້ມຄອງແຮງງານ (LMP). | ພາຍໃນສາມເດືອນຫຼັງຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ງົບປະມານຂອງໂຄງການ (ກ່ອນການເລີ່ມຕົ້ນການກໍ່ສ້າງ)<br>ແຈ້ງໃຫ້ທະນາຄານໂລກ ຮັບຊາບພາຍໃນ 48 ຊົ່ວໂມງຫຼັງຈາກຮູ້ເຫດການ ຫຼື ອຸບັດຕິເຫດ; ບົດລາຍງານຈະໄດ້ຮັບການສະໜອງໃຫ້ພາຍໃນ 3 ວັນເຮັດວຽກທາງລັດຖະການ;ຫຼັງຈາກເຫດການ ຫຼື ອຸປະຕິເຫດ ເກີດຂຶ້ນ. | ໜ່ວຍງານຄຸ້ມຄອງອົງປະກອບ (CMUs) ໃນແຕ່ລະກະຊວງ ເຊັ່ນ: (ກະຊວງກະສິກຳ ແລະປ່າໄມ້, ກະຊວງອຸດສາຫະກຳແລະການຄ້າ, ກະຊວງແຜນການ ແລະການລົງທຶນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ) ຈະຮັບຜິດຊອບພາຍໃນແຕ່ລະອົງປະກອບ ແລະ ຈະລາຍງານຜ່ານ ໜ່ວຍງານຄຸ້ມຄອງໂຄງການ ຂອງກະຊວງ ໂຍທາທິການ ແລະ ຂົນສົ່ງ (PMU of MPWT). |

| | | | |
|---|---|---|---|
| ຄ | **ບົດລາຍງານປະຈຳເດືອນຂອງບໍລິສັດ ຜູ້ຮັບເໝົາ ການກໍ່ສ້າງ**<br>• ສົ່ງບົດລາຍງານການຕິດຕາມປະຈຳເດືອນໂດຍສັງລວມການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນສິ່ງແວດລ້ອມ ແລະ ສັງຄົມ ໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ (DPWT).<br>• ສົ່ງບົດລາຍງານປະຈຳເດືອນດັ່ງກ່າວໃຫ້ທະນາຄານໂລກ ໂດຍກະຊວງ ຍທຂ (MPWT) ຕາມການຮຽກຮ້ອງ. | ທຸກໆເດືອນ (ແລະ ຕາມການຮ້ອງຂໍຂອງທະນາຄານໂລກ ) | ບໍລິສັດຜູ້ຮັບເໝົາ (ໂດຍ ຜ່ານ ກະຊວງ ຍທຂMPWT ຕາມທະນາຄານໂລກ ຮຽກຮ້ອງ) |

| | | | |
|---|---|---|---|
| ESS 1: ມາດຕະຖານການປະເມີນ ແລະ ການຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບດ້ານສິ່ງແວດລ້ອມ ແລະສັງຄົມ | | | |
| 1.1 | **ໂຄງສ້າງອົງການຈັດຕັ້ງ ທີ່ກ່ຽວຂ້ອງ**<br><br>• ສ້າງຕັ້ງ ແລະ ຮັກສາລະບົບໄວ້ (2 ທ່ານ) ເປັນຜູ້ປະສານງານຫຼັກເພື່ອເອົາໃຈໃສ່ຈັດການວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S) ແລະ (ອີກ 1 ຄົນ ) ຢູ່ໜ່ວຍງານຄຸ້ມຄອງໂຄງການ (PMU) ຂອງກະຊວງ ຍທຂ (MPWT); ແລະ 1 ທ່ານ ເປັນຜູ້ປະສານງານຫຼັກເພື່ອເອົາໃຈໃສ່ຈັດການວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S) ໃນແຕ່ລະໜ່ວຍງານຄຸ້ມຄອງແຕ່ລະອົງປະກອບ (CMUs) ໃນ ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະປ່າໄມ້ ແລະ ກະຊວງແຜນການ ແລະ ການລົງທຶນ ແລະ ຍັງຕ້ອງໄດ້ມອບໝາຍໃຫ້ມີ ( 1 ທ່ານ) ຮັບຜິດຊອບວຽກງານ ວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S) ຢູ່ພະແນກ ຍທຂ ແຂວງ (DWPTs) ຂອງ 5 ແຂວງ. PMU, CMUs ແລະ DWPTs ຈະຕ້ອງປະກອບດ້ວຍພະນັກງານທີ່ມີຄຸນວຸດທິເໝາະສົມ, ເພື່ອຮັບປະກັນການຄຸ້ມຄອງຄວາມສ່ຽງ (E&S) ຢ່າງຖືກຕ້ອງ. ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ, ສະຖາບັນຄົ້ນຄວ້າ ຍທຂ (EDPD/PTRI) ຂອງ ກະຊວງ ຍທຂ (MPWT) ໃນຈ້າງຊ່ຽວຊານພາຍໃນ ( 1 ທ່ານ ຊ່ວຍທີ່ປຶກສາດ້ານການປົກປ້ອງສັງຄົມ) ແລະ ອີກໜຶ່ງ (1 ທ່ານ ຊ່ວຍ ທີ່ປຶກສາດ້ານການປົກປ້ອງສິ່ງແວດລ້ອມ) ທີ່ຈະສະໜັບສະໜູນການສ້າງຄວາມອາດສາມາດ ແລະ ການຝຶກອົບຮົມໃຫ້ແກ່ຜູ້ປະສານງານຫຼັກ ເຫຼົ່ານັ້ນ. | ສ້າງຕັ້ງຂຶ້ນພາຍໃນ 30 ວັນ, ຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ງົບປະມານຂອງໂຄງການ<br><br>ຮັກສາ ຜູ້ປະສານງານຫຼັກ ຕະຫຼອດການຈັດຕັ້ງປະຕິບັດໂຄງການ ຈົນຈົບໂຄງການ. | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງອຸດສາຫະກຳແລະການຄ້າ, ກະຊວງກະສິກຳ ແລະປ່າໄມ້, ກະຊວງແຜນການ ແລະການລົງທຶນ, ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ. |

| | | | |
|---|---|---|---|
| **1.2** | **ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ**<br><br>• ປັບປຸງ, ຮັບຮອງເອົາ ແລະ ຈັດຕັ້ງປະຕິບັດ, ເອກະສານ ວຽກງານສິ່ງແວດລ້ອມ ແລະ ສັງຄົມ (E&S) ທີ່ອະນຸມັດຈາກ ທະນາຄານໂລກ ດັ່ງນີ້: ຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) – ເຊິ່ງລວມມີຂັ້ນຕອນການຄຸ້ມຄອງແຮງງານ (LMP) – ຮ່າງກອບໜ້າວຽກການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEF), ຮ່າງກອບ ໜ້າວຽກນະໂຍບາຍການຍົກຍ້າຍຈັດສັນ. (RPF), ແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ສັງຄົມ (ESCP) ນີ້, ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ (SEP) ແລະແຜນການອື່ນໆໃນອະນາຄົດ.<br><br>• ກະຊວງ ຍທຂ (MPWT) ຈະດຳເນີນການບົດສຶກສາຄວາມເປັນໄປໄດ້ (FS) ແລະ ບົດ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມແລະສັງຄົມ (ESIA) ສະບັບ ລະອຽດ ແລະ ກະກຽມແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມທີ່ກ່ຽວຂ້ອງ (ESMP) ສໍາລັບວຽກງານ ແລະ ກິດຈະກໍາທີ່ສະໜັບສະໜູນໂດຍໂຄງການ NLRECC, ໂດຍປະຕິບັດຕາມຂັ້ນຕອນການກວດກາ, ກັ່ນກອງ, ການປະເມີນອະນຸສັນຍາ ແລະ ມາດຕະການທີ່ອະທິບາຍລະອຽດ ແລະ ຕົກລົງໃນ (ESMF) ແລະ ເຄື່ອງມືອື່ນໆທີ່ກະກຽມສໍາລັບໂຄງການ (EGEF, SEP, RPF) ເພື່ອປະຕິບັດຕາມມາດຕະຖານຮ່າງກອບໜ້າວຽກດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ແລະ ລະບຽບ ຂອງ ສປປ ລາວ. (ESIA) / (ESMP) ຈະພັດທະນາບັນດາຂໍ້ກໍານົດສະເພາະດ້ານສິ່ງແວດລ້ອມ ແລະ ສັງຄົມເພື່ອປະກອບເຂົ້າໃນເອກະສານການປະມູນເພື່ອຮັບປະກັນການປະຕິບັດໂດຍຜູ້ຮັບເໝົາ. ບົດແຜນການຈັດຕັ້ງປະຕິບັດການຍົກຍ້າຍ (RAP) ແລະ ແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEP) ຍັງຄາດວ່າຈະມີການກະກຽມ ເພີ້ມຕື່ມ.<br><br>• ໃນກໍລະນີທີ່ ອົງປະກອບການຕອບໂຕ້ສຸກເສີນ ຂອງເຫດການທີ່ບໍ່ຄາດຄິດ (CERC) ຖືກເປີດໃຊ້, ລັດຖະບານຈະປະຕິບັດຕາມເອກະສານຊ້ອນທ້າຍ ເພີ້ມຕື່ມ, ວຽກ (CERC) ເພື່ອລວມເຂົ້າໃນ ESMF. | ປັບປຸງ, ຮັບຮອງເອົາ ແລະ ຈັດຕັ້ງປະຕິບັດເອກະສານ ຕາມ ESMF ເຊິ່ງລວມມີ EGEF; RPF ແລະ ESCP ຕະຫຼອດການຈັດຕັ້ງປະຕິບັດຈົນຈົບໂຄງການ.<br><br>(FS / ESIA) ທີ່ຈະເລີ່ມຕົ້ນໃນຕົ້ນປີ 2022. ແຜນການທັງໝົດທີ່ຈະຖືກກະກຽມ, ປຶກສາຫາລື ແລະເຜີຍແຜ່ ກ່ອນການເລີ່ມຕົ້ນກິດຈະກໍາຕ່າງໆ ຂອງສະຖານທີ່ສະເພາະຂອງໂຄງການ.<br><br>ປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ | ກະຊວງ ຍທຂ<br><br>(MPWT) |

| | | | |
|---|---|---|---|
| 1.3 | **ຂັ້ນຕອນ ແລະ ເອກະສານໃນ ການຄຸ້ມຄອງ.**<br>• ກວດກາກັ່ນກອງບັນດາໂຄງການຍ່ອຍທີ່ສະເໜີໃຫ້ສອດຄ່ອງກັບການກະກຽມ (ESMF) ສໍາລັບໂຄງການ, ແລະ ຫຼັງຈາກນັ້ນ, ຮ່າງແຜນ ESMPs, ປຶກສາຫາລື, ຮັບຮອງເອົາ ແລະຈັດຕັ້ງປະຕິບັດໂຄງການຍ່ອຍ ESMPs ແລະແຜນການອື່ນໆ, ຕາມຄວາມຕ້ອງການ, ໃນລັກສະນະຮູບແບບ ທີ່ທະນາຄານໂລກ ອະນຸມັດ.<br>• ກອບໜ້າວຽກ (TORs) ສໍາລັບກິດຈະກໍາການຊ່ວຍເຫຼືອດ້ານເຕັກນິກວິຊາການຂອງໂຄງການ (ການສຶກສາ ດ້ານເຕັກນິກ, ການເສີມສ້າງຄວາມເຂັ້ມແຂງຂອງພາກສ່ວນຕ່າງໆ ແລະ ການປັບປຸງ ກອບໜ້າວຽກດ້ານກົດຫມາຍ) ຈະຖືກທົບທວນຄືນໂດຍ ທະນາຄານໂລກກ່ອນທີ່ຈະຈັດຊື້ຈັດຈ້າງ / ແລະ ເລີ່ມຕົ້ນກິດຈະກໍາ, ເພື່ອຮັບປະກັນວ່າຂໍ້ກໍານົດ ດ້ານຮ່າງກອບໜ້າວຽກດ້ານສິ່ງແວດລ້ອມ ແລະ ສັງຄົມ (ESF) ໄດ້ຖືກປະສົມປະສານ ຢ່າງມີປະສິດທິພາບ. ຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນກັບກິດຈະກໍາ ຈະຖືກພິຈາລະນາຜ່ານ ກອບໜ້າວຽກ (TORs). | ຕະຫຼອດການຈັດຕັ້ງປະຕິບັດໂຄງການ ແລະ ກ່ອນການເລີ່ມຕົ້ນກິດຈະກໍາໂຄງການທີ່ກ່ຽວຂ້ອງ;<br><br>ກ່ອນການຈັດຊື້ຈັດຈ້າງ / ການເລີ່ມຕົ້ນຂອງກິດຈະກໍາໂຄງການ. | ສະຖາບັນຄົ້ນຄວ້າ ຍທຂ, ກະຊວງ ຍທຂ ແລະ ພະແນກ ຍທຂ ແຂວງ<br><br>ກອບໜ້າວຽກ (TORs) ຈະຖືກສົ່ງໃຫ້ທະນາຄານໂລກໂດຍແຕ່ລະໜ່ວຍງານຄຸ້ມຄອງອົງປະກອບ ແລະ ໜ່ວຍງານຄຸ້ມຄອງໂຄງການ. |
| 1.4 | **ອົງປະກອບສຸກເສີນ**<br>• ລັດຖະບານ ສປປ ລາວ ຈະຕ້ອງໄດ້ກະກຽມເອກະສານເພີ້ມຕື່ມຂອງ (CERC) ຕໍ່ກັບ (ESMF) ທີ່ອະທິບາຍເຖິງວິທີການ, ອະນຸສັນຍາທີ່ຈະປະຕິບັດຕາມໃນກໍລະນີທີ່ອົງປະກອບສຸກເສີນ ຈະຖືກເປີດໃຊ້ຕາມຂັ້ນຕອນທີ່ໄດ້ຕົກລົງກັບທະນາຄານໂລກ.<br>ອະນຸສັນຍາດັ່ງກ່າວອະທິບາຍເຖິງການຈັດລະບຽບຂອງສະຖາບັນ, ພາກສ່ວນທີ່ກ່ຽວຂ້ອງ, ຂັ້ນຕອນການກວດກາກັ່ນກອງ, ຄວາມສ່ຽງ ແລະມາດຕະການຫຼຸດຜ່ອນທີ່ຈະຖືກຈັດຕັ້ງປະຕິບັດສໍາລັບການລົງທຶນທີ່ຈະດໍາເນີນໃນກໍລະນີສຸກເສີນ. | ຕະຫຼອດໄລຍະເວລາສຸກເສີນ | ກະຊວງ ຍທຂ ແລະ ສະຖາບັນ ຄົ້ນຄວ້າ ຍທຂ<br>(MPWT and PTRI) |

| | | | |
|---|---|---|---|
| 1.5 | **ການຄຸ້ມຄອງບໍລິສັດຜູ້ຮັບເໝົາ ການກໍ່ສ້າງ**<br>• ລວມເອົາລັກສະນະທີ່ກ່ຽວຂ້ອງຂອງແຜນພັນທະສັນຍາດ້ານສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ (ESCP), ລວມທັງເອກະສານ E&S ທີ່ກ່ຽວຂ້ອງ ແລະ/ຫຼື ແຜນການ, ແລະ ຂັ້ນຕອນການຄຸ້ມຄອງແຮງງານ, ເຂົ້າໃນຂໍ້ກຳນົດສະເພາະຂອງ ESHS ຂອງເອກະສານການຈັດຊື້ຈັດຈ້າງກັບຜູ້ຮັບເໝົາ. ຫຼັງຈາກນັ້ນ, ໃຫ້ແນ່ໃຈວ່າຜູ້ຮັບເຫມົາປະຕິບັດ ຕາມຂໍ້ກຳນົດຂອງ ESHS ຂອງສັນຍາຂອງຜູ້ຮັບເໝົາ.<br>• ກ່ອນທີ່ຈະເລີ່ມຂະບວນການຈັດຊື້ຈັດຈ້າງໃດໆ, ກະຊວງ ຍທຂ (MPWT) ຈະຮັບປະກັນວ່າ ບົດ (ESIA/ESMP) ທີ່ສອດຄ້ອງກັນໄດ້ຖືກກະກຽມ, ການປຶກສາຫາລື ແລະ ເຜີຍແຜ່ ແລະ ຫນ່ວຍງານຄຸ້ມຄອງສິ່ງແວດລ້ອມແລະສັງຄົມໄດ້ມີສ່ວນຮ່ວມໃນການທົບທວນຄືນເງື່ອນໄຂການອ້າງອີງ, ການຮ້ອງຂໍ, ການສະເຫນີ, ການປະເມີນຜົນ ຂອງລາຍການດ້ານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບການສະເໜີ, ລວມເອົາຂໍ້ກຳນົດມາດຕາດ້ານສິ່ງແວດລ້ອມ ແລະ ສັງຄົມສຳລັບເອກະສານການປະມູນ (ຂອງທະນາຄານ ສປປ ລາວ ຫຼື ທະນາຄານໂລກ, ປະກາດ ຫຼື ກວດກາກ່ອນ) ແລະລະບຸໃນສັນຍາເພື່ອຮັບປະກັນການປະຕິບັດຕາມໂດຍຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍຂອງແຜນ ESCP, ESMF, SEP, LMP ແລະສະເພາະ. ESIA, ESMPs ແລະແຜນການອື່ນໆທີ່ກະກຽມສຳລັບໂຄງການແລະໂຄງການຍ່ອຍ.<br>• ກະຊວງ ຍທຂ (MPWT) ຈະຮຽກຮ້ອງໃຫ້ຜູ້ຮັບເຫມົາ ແລະ ຜູ້ຮັບເຫມົາຍ່ອຍທັງຫມົດປະຕິບັດຂັ້ນຕອນ ຕໍ່ໄປນີ້ລວມຢູ່ໃນເອກະສານການປະມູນ ແລະ ສັນຍາ.<br>o ໃຫ້ຄຳໝັ້ນສັນຍາໃນການປະຕິບັດປ້ອງກັນທາງສັງຄົມກ່ຽວກັບແຮງງານເດັກ; ຄວາມຮຸນແຮງທາງເພດ, ບົດບາດຍິງຊາຍ, ການ ຄຸກຄາມທາງເພດ ແລະ ຄວາມສ່ຽງຕໍ່ການຕິດສານເສບຕິດ ອື່ນໆ. | ຂໍ້ກຳນົດສະເພາະຂອງການປ້ອງກັນຄວາມປອດໄພສຸຂະພາບ, ສິ່ງແວດລ້ອມ ແລະ ສັງຄົມ (ESHS) ທີ່ຈະລວມຢູ່ໃນເອກະສານການປະມູນ ແລະ ສັນຍາຂອງຜູ້ຮັບເຫມົາ<br><br>ການປະຕິບັດເຫຼົ່ານີ້ ແມ່ນໂດຍຜູ້ຮັບເຫມົາ ມີຄວາມຮັບຜິດຊອບແລະ ການຊີ້ນຳຂອງຜູ້ຮັບເຫມົາ, ຕະຫຼອດການຈັດຕັ້ງປະຕິບັດໂຄງການ. | ໜ່ວຍງານຄຸ້ມຄອງໂຄງການ (PMU) ຂອງກະຊວງ ຍທຂ ແລະ ໜ່ວຍງານຄຸ້ມຄອງ ອົງປະກອບ (CMUs) ຈະຮັບຜິດຊອບສຳລັບການປະມູນ ແລະ ການກະກຽມສັນຍາໂດຍການສະຫນັບ ສະຫນູນຈາກສະຖາບັນຄົ້ນຄວ້າ ຍທຂ (PTRI) ເພື່ອຮັບປະກັນເອກະສານ ວຽກສິ່ງແວດລ້ອມ ແລະ ສັງຄົມ (E&S) ທີ່ກ່ຽວຂ້ອງ.<br><br>ສະຖາບັນຄົ້ນຄວ້າ ຍທຂ (PTRI) ແລະ ພະແນກ ຍທຂ ແຂວງ (DWPTs) ຂັ້ນແຂວງ ແລະ ຜູ້ຮັບເໝົາການກໍ່ສ້າງ |

| | | | |
|---|---|---|---|
| 1.6 | ກະຊວງ ຍທຂ ແລະ ລັດຖະບານ ສປປ ລາວ ຈະພັດທະນາເງື່ອນໄຂດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມມາດຕະການທີ່ໄດ້ອະທິບາຍ ແລະ ຕົກລົງໃນ ESMF, RPF, RAP, ESIA/ESMP, EGEF, ESCP, LMP, SEP ແລະ ແຜນການອື່ນໆທີ່ກ່ຽວຂ້ອງເພື່ອປະກອບເຂົ້າໃນເອກະສານປະມູນ ເພື່ອຮັບປະກັນການ ຄ່າໃຊ້ຈ່າຍຂອງມາດຕະການເຫຼົ່ານີ້ແມ່ນຄ່າໃຊ້ຈ່າຍໂດຍຜູ້ຮັບເຫມົາໃນ ບັນຊີລາຍການປະລິມານສໍາລັບວຽກງານ (BoQ) ແລະ ສັນຍາການຊື້ນໍາ (ລວມທັງມາດຕະການດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ຂໍ້ກໍານົດທີ່ລວມຢູ່ໃນ ESMF, ກົດລະບຽບການປະຕິບັດທີ່ດີ, ການປະສານງານ, ການລາຍງານ ແລະ ການຕິດຕາມ, ແລະ ກົນໄກການຮ້ອງທຸກ, ແລະອື່ນໆ) | ກ່ອນທີ່ຂະບວນການຈັດຊື້ຈັດຈ້າງຈະເລີ່ມຕົ້ນ<br><br>ກ່ອນທີ່ຈະອອກເອກະສານການປະມູນ ສໍາລັບການເຮັດວຽກ | ສະຖາບັນ ຄົ້ນຄວ້າ ຍທຂ, ກະຊວງ ຍທຂ ແລະ ໜ່ວຍງານຄຸ້ມຄອງໂຄງການ<br><br>(PTRI and PMU of MPWT) |

| | | | |
|---|---|---|---|
| 1.7 | **ການອະນຸຍາດ, ການເຫັນດີ ແລະ ການໃຫ້ອຳນາດ:**<br><br>ກະຊວງ ຍທຂ (MPWT) ຈະໄດ້ຮັບ ແລະ ຮັບປະກັນການໄດ້ຮັບຕາມຄວາມເໝາະສົມ, ໃບອະນຸຍາດ, ການເຫັນດີ, ຍິນຍອມ ແລະ ການອະນຸຍາດທີ່ໃຊ້ໄດ້ກັບໂຄງການຈາກພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ, ອີງຕາມກົດໝາຍ ຂອງ ສປປ ລາວ ທີ່ໃຊ້ໄດ້ດັ່ງນີ້:<br><br>1. ການອະນຸມັດບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ESIA) ແລະ ເອກະສານ/ຮ່າງກອບໜ້າວຽກທີ່ກ່ຽວຂ້ອງໂດຍບໍລິສັດທີ່ປຶກສາ ດຳເນີນການ.<br>2. ການຍິນຍອມເຫັນດີເປັນລາຍລັກອັກສອນຈາກຜູ້ໄດ້ຮັບຜົນກະທົບ ທີ່ມີສ່ວນຮ່ວມກັບໂຄງການ<br>3. ການກຳນົດສະຖານທີ່ສຳລັບບໍ່ດິນ, ບໍ່ຫີນ, ສະຖານທີ່ຕັ້ງໂຮງງານປະສົມ ແລະ ການໄດ້ຮັບໃບອະນຸຍາດນຳໃຊ້ສຳລັບກິດຈະກຳການກໍ່ສ້າງ. ຜູ້ສະໜອງວັດຖຸດິບທັງໝົດເຊັ່ນ: ດິນຊາຍ, ຫີນ, ດິນຈີ່, ໄມ້ທ່ອນ ແລະ ການກໍ່ສ້າງອື່ນໆທີ່ກ່ຽວຂ້ອງ ຄວນໄດ້ຮັບອະນຸຍາດດ້ວຍເອກະສານທາງກົດໝາຍເພື່ອດຳເນີນການເປັນທາງການ.<br>4. ໄດ້ຮັບໃບອະນຸຍາດສະຖານທີ່ຖິ້ມຂີ້ເຫຍື້ອ<br>5. ໃບຢັ້ງຢືນກ່ຽວກັບສິ່ງແວດລ້ອມ (ECC) ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MONRE) ໃສ່ສຳລັບລະດັບ EIA ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ສຳລັບລະດັບ IEE<br>6. ໃບຢັ້ງຢືນການກວດກາ, ເກັບກູ້ UXO ຈາກອົງການເກັບກູ້ລະເບີດແຫ່ງຊາດ.<br><br>ໂຄງການຈະປະຕິບັດ ຫຼື ເຮັດໃຫ້ເຫມາະສົມ, ໂດຍມີເງື່ອນໄຂທີ່ກຳນົດໄວ້ໃນການອະນຸຍາດ, ການເຫັນດີ ແລະ ອະນຸຍາດເຫຼົ່ານີ້ໃນໄລຍະການປະຕິບັດໂຄງການ. | ໃນລະຫວ່າງຂັ້ນຕອນການວາງແຜນ, ກ່ອນທີ່ຈະຈັດຊື້ຈັດຈ້າງ ວຽກງານຕ່າງໆ ແລະ ຢູ່ພາຍໃນໄລຍະເວລາທີ່ກຳນົດໄວ້ ແລະ ອອກໃນໃບອະນຸຍາດ, ການເຫັນດີ, ການຍິນຍອມ ແລະ ການອະນຸຍາດ<br><br>ຕະຫຼອດການຈັດຕັ້ງປະຕິບັດໂຄງການ ແລະ ກ່ອນທີ່ຈະເລີ່ມກິດຈະກຳການກໍ່ສ້າງ | ສະຖາບັນ ຄົ້ນຄວ້າ ຍທຂ, ກະຊວງ ຍທຂ ແລະ ໜ່ວຍງານຄຸ້ມຄອງໂຄງການ ແລະ ບໍລິສັດຜູ້ຮັບເໝົາ<br><br>PTRI and XPMU of MPWT ) and Contractor |

| ESS 2: ມາດຕະຖານເງື່ອນໄຂການເຮັດວຽກ ແລະ ແຮງງານກຳມະກອນ | | | |
|---|---|---|---|
| **2.1** | **ຂັ້ນຕອນໃນການຄຸ້ມຄອງແຮງງານກຳມະກອນ**<br>• ໂຄງການຈະປັບປຸງ, ຮັບຮອງເອົາ ແລະ ປະຕິບັດຂັ້ນຕອນການຄຸ້ມຄອງແຮງງານກຳມະກອນທີ່ສອດຄ່ອງກັບກົດໝາຍແຮງງານ ຂອງ ສປປ ລາວ ແລະ ESS 2. ຂັ້ນຕອນເຫຼົ່ານີ້ແມ່ນໄດ້ກຳນົດໄວ້ໃນຂັ້ນຕອນການຄຸ້ມຄອງແຮງງານຂອງໂຄງການ (LMP) ທີ່ໄດ້ຮັບການພັດທະນາໂດຍ ກະຊວງ ຍທຂ (MPWT).<br>• ຫຼັກການປະຕິບັດ (CoC) ທີ່ສອດຄ່ອງກັບຂັ້ນຕອນການຄຸ້ມຄອງແຮງງານກຳມະກອນເຫຼົ່ານີ້ຈະຖືກລວມເຂົ້າໃນສັນຍາທັງໝົດ. ສັນຍາຈະປະກອບມີຂໍ້ກຳນົດເງື່ອນໄຂການເຮັດວຽກທີ່ສອດຄ່ອງກັບກົດຫມາຍແຮງງານ ຂອງ ສປປ ລາວ, ສຸຂະພາບ ແລະ ຄວາມປອດໄພ ແລະ ESS2, ກົດລະບຽບການປະຕິບັດ ແລະ ຂໍ້ກຳນົດສຳລັບຜູ້ອອກແຮງງານ (ລວມທັງຜູ້ຮັບເຫມົາຍ່ອຍ) ທີ່ຈະຮັບຮູ້ເຊັ່ນກັນ ຢ່າງມີສະຕິ ເອົາໃຈໃສ່ ແລະໃຫ້ສັນຍາເປັນລາຍລັກອັກສອນ. ການໃຊ້ແຮງງານເດັກ ແລະ ແຮງງານທີ່ບັງຄັບ (ຕາມທີ່ໄດ້ກຳນົດໄວ້ໃນ ESS2 ແລະ ກົດຫມາຍແຮງງານ ຂອງ ສປປ ລາວ) ແມ່ນຂໍ້ຫ້າມຢູ່ໃນໂຄງການ. | ປັບປຸງ, ຮັບຮອງເອົາ ແລະຈັດຕັ້ງປະຕິບັດບໍ່ເກີນເກົ້າສິບ (90) ວັນ; ພາຍຫຼັງຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ງົບປະມານຂອງໂຄງການ<br>ຈັດຕັ້ງປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ | ສະຖາບັນ ຄົ້ນຄວ້າ ຍທຂ, ກະຊວງ ຍທຂ ແລະ ໜ່ວຍງານຄຸ້ມຄອງໂຄງການ, ໜ່ວຍງານຄຸ້ມຄອງອົງປະກອບ<br>ແລະ ບໍລິສັດຜູ້ຮັບເໝົາ |
| 2.2 | **ກົນໄກແກ້ໄຂຄຳຮ້ອງທຸກສຳລັບແຮງງານ, ກຳມະກອນໃນໂຄງການ**<br>• ສ້າງຕັ້ງ, ຮັກສາ, ແລະ ດຳເນີນກົນໄກແກ້ໄຂຄຳຮ້ອງທຸກສຳລັບແຮງງານ, ກຳມະກອນໃນໂຄງການ, ດັ່ງທີ່ໄດ້ອະທິບາຍໄວ້ໃນແຜນການຄຸ້ມຄອງແຮງງານ (LMP) ແລະ ສອດຄ່ອງກັບ ESS2. | ປັບປຸງ, ຮັບຮອງເອົາ ແລະຈັດຕັ້ງປະຕິບັດບໍ່ເກີນເກົ້າສິບ (90) ວັນ; ພາຍຫຼັງຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ງົບປະມານຂອງໂຄງການ<br>ຈັດຕັ້ງປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ | ໜ່ວຍງານຄຸ້ມຄອງໂຄງການຂອງກະຊວງ ຍທຂ, ໜ່ວຍງານຄຸ້ມຄອງອົງປະກອບ ກະຊວງອື່ນໆ<br>ແລະ ບໍລິສັດຜູ້ຮັບເໝົາ |

| | | | |
|---|---|---|---|
| 2.3 | **ມາດຕະການທາງດ້ານສຸຂະພາບ ແລະ ຄວາມປອດໄພຂອງການປະຕິບັດໜ້າທີ່ຂອງແຮງງານ (OHS).**<br>• ປັບປຸງ, ຮັບຮອງເອົາ, ແລະ ປະຕິບັດມາດຕະການດ້ານວຽກງານ, ອາຊີບ, ສຸຂະພາບ ແລະ ຄວາມປອດໄພ (OHS) ທີ່ລະບຸໄວ້ໃນແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMP).<br>• ເນື່ອງຈາກການແຜ່ລະບາດຂອງພະຍາດໂຄວິດ (Covid 19) ນີ້, ລັດຖະບານ ສປປ ລາວ ຈະກະກຽມແຜນການປ້ອງກັນ ແລະ ຄຸ້ມຄອງຄວາມສ່ຽງ (Covid 19) ປະຕິບັດຕາມຄຳແນະນຳຂອງເອກະສານຊ້ອນທ້າຍ ທີ່ 17 ຂອງຮ່າງກອບໜ້າວຽກຄຸ້ມຄອງສິ່ງແວດລ້ອມ (ESMF) ແລະ ແຜນຄຸ້ມຄອງແຮງງານ (LMP) ພ້ອມທັງມາດຕະການທີ່ລັດຖະບານກຳນົດໄວ້. ແຜນການດັ່ງກ່າວຈະຖືກຕິດຕັ້ງຢູ່ ພະແນກ ຍທຂ ແຂວງ (DWPTs), ທຸກອົງການ, ຜູ້ຄວບຄຸມ ແລະ ຜູ້ຮັບເໝົາ. ແຜນການນີ້ຈະຖືກກະກຽມໂດຍການປະສານງານກັບເຈົ້າໜ້າທີ່ສາທາລະນະສຸກ ແລະອຳນາດການປົກຄອງທ້ອງຖິ່ນ. ແຜນການປ້ອງກັນ ແລະ ຄຸ້ມຄອງຄວາມສ່ຽງ (Covid 19) ຈະກຳນົດການປະຕິບັດທີ່ຈະຮັບຜິດຊອບໃນ ໜ່ວຍງານຄຸ້ມຄອງອົງປະກອບ (CMUs), ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍ ໃນການກໍ່ສ້າງທັງໝົດ.<br>• ໂຄງການຈະຮັບປະກັນວ່າຜູ້ຮັບເໝົາປະຕິບັດແຜນວຽກງານ, ສຸຂະພາບ ແລະ ຄວາມປອດໄພ (OHS) ທີ່ສະໜອງໃຫ້ເປັນສ່ວນຫນຶ່ງຂອງສັນຍາກັບຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍ ແລະ ໂຄງການຈະສະໜອງອຸປະກອນປ້ອງກັນສ່ວນບຸກຄົນ (PPE) ໃຫ້ແກ່ຜູ້ອອກແຮງງານກຳມະກອນ ຕາມທີ່ໄດ້ອະທິບາຍໄວ້ໃນ ESMF ແລະ LMP. ນອກນີ້, ລັດຖະບານ ສປປ ລາວ ຍັງຈະຕິດຕາມກວດກາຄຸນນະພາບນ້ຳ ແລະ ການລະບາຍພະຍາດໂຄວິດ 19 ແລະ/ຫຼື ພະຍາດສັດອື່ນໆຢູ່ເຂດໂຄງການ ແລະ ເຂດອິດທິພົນຕາມທີ່ໄດ້ຕົກລົງໃນແຜນການປ້ອງກັນພະຍາດໂຄວິດ 19 ເພື່ອຮັບປະກັນຄວາມປອດໄພຂອງແຮງງານ, ກຳມະກອນ ແລະ ຫຼຸດຜ່ອນຄວາມສ່ຽງຕໍ່ການລະບາດຂອງຊຸມຊົນໃນເຂດໂຄງການ. | ປັບປຸງ, ຮັບຮອງເອົາ ແລະຈັດຕັ້ງປະຕິບັດບໍ່ເກີນເກົ້າສິບ (90) ວັນ; ພາຍຫຼັງຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນຳໃຊ້ງົບປະມານຂອງໂຄງການ<br>ຈັດຕັ້ງປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ<br>ການປະຕິບັດງົບປະມານຂອງຜູ້ຮັບເຫມົາຂອງແຜນການຄຸ້ມຄອງແຮງງານ (LMP) ແລະມາດຕະການແຜນວຽກງານ, ອາຊີບ, ສຸຂະພາບ ແລະ ຄວາມປອດໄພ (OHS) ທີ່ຈະສະແດງໃຫ້ເຫັນໃນການສະເຫນີທາງດ້ານການເງິນ ແລະ ດ້ານເຕັກນິກວິຊາການຂອງບໍລິສັດຜູ້ຮັບເໝົາ. | ໜ່ວຍງານຄຸ້ມຄອງໂຄງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ (PMU of MPWT). ກະຊວງກະສິກຳ ແລະປ່າໄມ້, ກະຊວງອຸດສາຫະກຳແລະການຄ້າ, ກະຊວງແຜນການ ແລະການລົງທຶນ,<br>ໜ່ວຍງານຄຸ້ມຄອງອົງປະກອບ ໃນແຕ່ລະກະຊວງ ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ<br>ແລະ ບໍລິສັດຜູ້ຮັບເໝົາ. |

| ESS 3: ມາດຕະຖານການຄຸ້ມຄອງ ແລະ ປ້ອງກັນມົນລະພິດ ແລະ ຊັບພະຍາກອນຢ່າງມີ ປະສິດທິພາບ. | | | |
|---|---|---|---|
| **3.1** | **ການຄຸ້ມຄອງຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະວັດຖຸອັນຕະລາຍ**<br><br>• ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະສັງຄົມ (ESIAs ແລະ / ຫຼື ESMPs) ຈະປະກອບມີມາດຕະການປ້ອງກັນ ແລະ ຫຼຸດຜ່ອນມົນລະພິດໃນລະຫວ່າງການກໍ່ສ້າງ ແລະ ຊ່ວງການດຳເນີນງານເພື່ອຫຼີກເວັ້ນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ. ລັດຖະບານ ສປປ ລາວຈະຮັບປະກັນວ່າສັນຍາຈະມີຂໍ້ການຄຸ້ມຄອງສິ່ງເສດເຫຼືອ, ລວມທັງການຄຸ້ມຄອງອຸປະກອນປ້ອງບຸກຄົນ ( PPE) ທີ່ໃຊ້ສຳລັບປ້ອງກັນການລະບາດຂອງພະຍາດ Covid 19. | ໃບອະນຸຍາດກຳຈັດ ຫຼື ຖິ້ມສິ່ງເສດເຫຼືອຈະໄດ້ຮັບກ່ອນທີ່ຈະເລີ່ມຕົ້ນການກໍ່ສ້າງ.<br><br>ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງບໍລິສັດຜູ້ຮັບເໝົາ (CESMP) ຈະຖືກມອບໃຫ້ ກະຊວງ ຍທຂ (MPWT) ພາຍໃນ 30 ມື້, ຫຼັງຈາກເຊັນສັນຍາ ແລະສະແດງເຖິງການຄຸ້ມຄອງສິ່ງເສດເຫຼືອ ແລະ ວັດຖຸອັນຕະລາຍ.<br><br>ການຕິດຕາມການຈັດຕັ້ງປະຕິບັດມາດຕະການເຫຼົ່ານີ້ຈະດຳເນີນເປັນປະຈຳວັນແລະຕິດຕາມຕະຫຼອດການຈັດຕັ້ງປະຕິບັດໂຄງການ.<br><br>ການຈັດຕັ້ງປະຕິບັດງົບປະມານຂອງຜູ້ຮັບເໝົາກ່ຽວກັບ (ESIAs/ESMPs) ຕ້ອງໄດ້ສະແດງໃຫ້ເຫັນໃນການສະເຫນີທາງດ້ານການເງິນ ແລະ ດ້ານເຕັກນິກວິຊາການຂອງບໍລິສັດຮັບເໝົາ. | ໜ່ວຍງານຄຸ້ມຄອງໂຄງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ (PMU of MPWT).<br>ໜ່ວຍງານຄຸ້ມຄອງອົງປະກອບ ໃນແຕ່ລະກະຊວງ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ<br><br>ແລະ ບໍລິສັດຜູ້ຮັບເໝົາ. |

| | | | |
|---|---|---|---|
| 3.2 | **ການຄຸ້ມຄອງ ແລະ ປ້ອງກັນມົນລະພິດ ແລະ ຊັບພະຍາກອນຢ່າງມີ ປະສິດທິພາບ.**<br><br>• ພັດທະນາ ແລະ ຈັດຕັ້ງປະຕິບັດມາດຕະການ ການປ້ອງກັນມົນລະພິດ ແລະ ຄຸ້ມຄອງຊັບພະຍາກອນ ຢ່າງມີປະສິດທິພາບ, ຊຶ່ງເປັນສ່ວນຫນຶ່ງຂອງແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs) ທີ່ກ່ຽວຂ້ອງ. | ESMPs ແມ່ນພັດທະນາເປັນສ່ວນຫນຶ່ງຂອງວຽກງານ ບົດສຶກສາຄວາມເປັນໄປໄດ້ (FS) / ບົດປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ (ESIA).<br><br>ຕະຫຼອດການຈັດຕັ້ງປະຕິບັດໂຄງການ. | ໜ່ວຍງານຄຸ້ມຄອງໂຄງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ (PMU of MPWT).<br><br>ແລະ ບໍລິສັດຜູ້ຮັບເໝົາ. |

| ESS 4: ມາດຕະຖານສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນ | | | |
|---|---|---|---|
| 4.1 | **ຄວາມປອດໄພຂອງການນໍາໃຊ້ ເສັ້ນທາງ,ການຈະລາຈອນ ແລະ ຂົນສົ່ງ:**<br><br>• ສໍາລັບການຄຸ້ມຄອງການຄວາມປອດໄພ ຖະໜົນ ແລະ ການຈະລາຈອນ, ລັດຖະບານ ສປປ ລາວ ຈະຮັບປະກັນວ່າຜູ້ຮັບເໝົາກໍ່ສ້າງ ແລະ ປະຕິບັດແຜນການຄຸ້ມຄອງການຈະລາຈອນຂອງພື້ນທີ່ໂຄງການສະເພາະ (ເປັນສ່ວນໜຶ່ງຂອງ ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງບໍລິສັດຜູ້ຮັບເໝົາ C-ESMP), ທາງເລືອກສໍາລັບການສັນຈອນ ແລະ ອີງການຄຸ້ມຄອງການຈາລະຈອນ, ເສັ້ນທາງທີ່ຖືກກະທົບ, ແລະ ອື່ນໆ. ແຜນດັ່ງກ່າວຈະໄດ້ ເຜີຍແຜ່ຂໍ້ມູນກັບເຈົ້າໜ້າທີ່ຕໍາຫຼວດຈາລະຈອນຢູ່ຂັ້ນທ້ອງຖິ່ນ ແລະເຜີຍແຜ່ເຂົ້າໄປໃນຊຸມຊົນໃນຮູບແບບ (ການພິມ, ວິທະຍຸ ຫຼື ວິທີການອື່ນໆ) ແລະ ໄລຍະເວລາທີ່ຈະຕົກລົງກັບຜູ້ຮັບເໝົາການກໍ່ສ້າງ. ແຜນການດັ່ງກ່າວຈະໄດ້ຮັບການພັດທະນາໃນວິທີການຫຼີກລ່ຽງຊົ່ວໂມງເລັ່ງດ່ວນ, ເພື່ອຮັບປະກັນການຄວບຄຸມການຈະລາຈອນໂດຍການວາງທຸງ ແລະ ປ້າຍທີ່ພຽງພໍ (ປະຕິບັດຕາມມາດຕະຖານສາກົນ ແລະ ຄຸນນະພາບ) ຕາມເສັ້ນທາງເປົ້າໝາຍຂອງໂຄງການ, ມີພຽງແຕ່ຜູ້ຂັບຂີ່ທີ່ໄດ້ຮັບການຝຶກອົບຮົມ, ແລະ ຄວາມປອດໄພຂອງຍານພາຫະນະຈະຖືກກວດກາເປັນປົກກະຕິ. | ຂໍ້ກໍານົດສໍາລັບການຈະລາຈອນ ແລະຄວາມປອດໄພທາງຖະໜົນຈະ ເປັນສ່ວນໜຶ່ງຂອງເອກະສານການ ປະມູນ. ແຜນການດັ່ງກ່າວຈະຖືກທົບທວນ ແລະ ອະນຸມັດໂດຍ ກະຊວງ ຍທຂ (MPWT) ກ່ອນທີ່ຈະເລີ່ມກິດຈະກໍາຂອງໂຄງ ການ.<br><br>ການຈັດຕັ້ງປະຕິບັດງົບປະມານຂອງຜູ້ ຮັບເໝົາ<br><br>ບົດປະເມີນຜົນກະທົບດ້ານສິ່ງແວດ ລ້ອມ ແລະ ສັງຄົມ(ESIAs ) / ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs)<br><br>ຕ້ອງໄດ້ ສະແດງໃຫ້ເຫັນໃນການສະເໜີ ທາງດ້ານການເງິນ ແລະດ້ານເຕັກນິກວິຊາການຂອງບໍລິສັ ດຜູ້ຮັບເໝົາ. | ບັນດາຜູ້ຮັບເໝົາ ການກໍ່ສ້າງ |

| | | | |
|---|---|---|---|
| 4.2 | **ຄວາມປອດໄພ ແລະ ສຸຂະພາບ ຂອງຊຸມຊົນ:**<br><br>• ໂຄງການຈະຮັບປະກັນໃຫ້ຜູ້ຮັບເໝົາປະຕິບັດມາດຕະການ ແລະ ການປະຕິບັດເພື່ອຄຸ້ມຄອງຄວາມສ່ຽງ ແລະ ຜົນກະທົບສະເພາະຕໍ່ຊຸມຊົນທີ່ຄາດຈະເກີດຈາກກິດຈະກຳຂອງໂຄງການ. ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ(ESIAs) ແລະ / ຫຼື ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs) ຈະປະກອບມີມາດຕະການປົກປ້ອງສຸຂະພາບ ແລະ ຄວາມປອດໄພຂອງຊຸມຊົນທີ່ສອດຄ່ອງກັບຂໍ້ກຳນົດໃນຮ່າງກອບໜ້າວຽກສິ່ງແວດລ້ອມ ແລະ ສັງຄົມ (ESF) ແລະ ຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ລວມທັງການປ້ອງກັນ ແລະ ຫຼີກເວັ້ນ: ອຸປະຕິເຫດການຈາລະຈອນ, ການສົ່ງຕໍ່ຂອງພະຍາດ ແລະ, ການຄຸກຄາມທາງເພດ, ຄວາມສ່ຽງຕິດສານເສບຕິດ ແລະ ຄວາມຮຸນທາງເພດ, ບົດບາດຍິງຊາຍ, ພະຍາດ (Covid 19) ແລະ ພະຍາດທາງສັດ (zoonotic) ແລະ ອື່ນໆ. ການລະບາດຂອງພະຍາດທີ່ສາມາດເພີ່ມຄວາມສ່ຽງຕໍ່ຊຸມຊົນ ແລະ ຜູ້ອອກແຮງງານ, ກຳມະກອນ, ໃນບັນດາຄວາມສ່ຽງອື່ນໆທີ່ຈະຖືກລວມເອົາມາດຕະການເຫຼົ່ານີ້ຢູ່ໃນ ESMPs ເພື່ອກະກຽມໃຫ້ສອດຄ່ອງກັບ ESMF ແລະ ໃນຮູບແບບທີ່ທະນາຄານໂລກ ອະນຸມັດ. | ວຽກບົດສຶກສາຄວາມເປັນໄປໄດ້ (FS) / ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) (ລວມທັງ ESMPs) ເລີ່ມແຕ່ຕົ້ນປີ 2022.<br><br>ກ່ອນທີ່ຈະລົງນາມໃນວຽກງານທີ່ກ່ຽວຂ້ອງ, ແລະຕະຫຼອດການປະຕິບັດໂຄງການ<br><br>ການຈັດຕັ້ງປະຕິບັດງົບປະມານຂອງຜູ້ຮັບເໝົາ<br><br>ESIAs/ESMPs ຕ້ອງໄດ້ສະແດງອອກໃຫ້ເຫັນໃນການສະເໜີທາງດ້ານການເງິນ ແລະ ດ້ານເຕັກນິກວິຊາການຂອງບໍລິສັດຜູ້ຮັບເໝົາ. | ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ (PMU of MPWT). ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ ແລະ ກະຊວງກະສິກຳ ແລະ ປ່າໄມ້<br><br>ແລະ ບໍລິສັດຜູ້ຮັບເໝົາ. |

| | | | |
|---|---|---|---|
| 4.3 | **ຄຸ້ມຄອງຄວາມສ່ຽງຂອງຄວາມຮຸນແຮງທາງເພດ (GBV) ແລະ ການຂູດຮີດທາງເພດ ແລະ ການລ່ວງລະເມີດ ແລະ ການລ່ວງລະເມີດທາງເພດ (SEA/SH) ແລະຄວາມຮຸນແຮງຕໍ່ເດັກນ້ອຍ:**<br>• ປັບປຸງ, ຮັບຮອງເອົາ ແລະຈັດຕັ້ງປະຕິບັດແຜນປະຕິບັດງານຄວາມຮຸນແຮງທາງເພດ, ບົດບາດຍິງຊາຍ (ແຜນປະຕິບັດງານ GBV) ຕາມທີ່ກຳນົດໄວ້ໃນ ESMPs ໂດຍອີງໃສ່ ESMF ເພື່ອປະເມີນ ແລະ ຄຸ້ມຄອງຄວາມສ່ຽງຂອງຄວາມຮຸນແຮງທາງເພດ (GBV) ແລະ ການຂູດຮີດທາງເພດ ແລະ ການລ່ວງລະເມີດທາງເພດ (SEA/SH) ແລະຄວາມຮຸນແຮງຕໍ່ເດັກນ້ອຍ (VAC).<br>• ມີສ່ວນຮ່ວມ ແລະມີສ່ວນຮ່ວມໃນການປະຕິບັດ GBV, SEA/SH ແລະ ຜູ້ໃຫ້ບໍລິການ VAC | ວຽກບົດສຶກສາຄວາມເປັນໄປໄດ້ (FS) / ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) (ລວມທັງ ESMPs) ເລີ່ມແຕ່ຕົ້ນປີ 2022.<br>ກ່ອນທີ່ຈະລົງນາມໃນວຽກງານທີ່ກ່ຽວຂ້ອງ, ແລະ ຕະຫຼອດການປະຕິບັດໂຄງການ | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະປ່າໄມ້, ກະຊວງອຸດສາຫະກຳແລະການຄ້າ, ກະຊວງແຜນການ ແລະການລົງທຶນ,<br>ແລະ<br>ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ |

| ESS 5: ມາດຕະຖານການເວນຄືນທີ່ດິນ, ຂໍ້ຈຳກັດການນຳໃຊ້ທີ່ດິນ ແລະ ຍົກຍ້າຍໂດຍບໍ່ສະໝັກໃຈ | | | |
|---|---|---|---|
| 5.1 | **ແຜນການຍົກຍ້າຍ:**<br><br>• ກະກຽມ, ປຶກສາຫາລື, ຮັບຮອງເອົາ, ເຜີຍແຜ່ຂໍ້ມູນ ແລະ ຈັດຕັ້ງປະຕິບັດແຜນການຍົກຍ້າຍຈັດສັນ (RAPs) ທີ່ສອດຄ່ອງກັບຄວາມຕ້ອງການຂອງຮ່າງກອບໜ້າວຽກນະໂຍບາຍຍົກຍ້າຍ (RPF), ແລະ ESS5, ແລະ ນິຕິກຳ ຂອງ ສປປ ລາວ ແລະ ສອດຄ່ອງກັບຜົນຂອງຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF) ແລະ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ(ESIAs) ແລະ ປະຕິບັດ (RAPs) ທີ່ກ່ຽວຂ້ອງກ່ອນທີ່ຈະດຳເນີນກິດຈະກຳທີ່ກ່ຽວຂ້ອງ, ໃນ ວິທີການທີ່ ທະນາຄານໂລກ ອະນຸມັດ. | ຮ່າງກອບໜ້າວຽກນະໂຍບາຍຍົກຍ້າຍ (RPF) ກະກຽມ ແລະ ເຜີຍແຜ່ຂໍ້ມູນກ່ອນບົດການປະເມີນລາຄາ ຂອງໂຄງການ.<br><br>ວຽກບົດສຶກສາຄວາມເປັນໄປໄດ້ (FS) / ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ (ESIA) (ລວມທັງລາຍລະອຽດຄວາມຕ້ອງການຄອບຄອງທີ່ດິນ ແລະ ການກະກຽມ RAPs) ເລີ່ມແຕ່ຕົ້ນປີ 2022.<br><br>(RAPs) ຈະຖືກພັດທະນາ ແລະ ເຮັດໃຫ້ລະອຽດຈະແຈ້ງໂດຍທະນາຄານໂລກ ແລະ ເຜີຍແຜ່ຂໍ້ມູນຕໍ່ສາທາລະນະຊົນ ແລະ ຄ່າຊົດເຊີຍທັງໝົດທີ່ຈ່າຍໃຫ້ກັບຄອບຄົວ/ຜູ້ໄດ້ຮັບຜົນກະທົບ ກ່ອນທີ່ວຽກງານກໍ່ສ້າງ ກິດຈະກຳຈະຖືກຈັດຕັ້ງປະຕິບັດ. | ກະຊວງ ໂຍທາທິການ ແລະ ຂົນສົ່ງ; ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ, ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ, |

| | | | |
|---|---|---|---|
| 5.2 | **ກົນໄກການແກ້ໄຂຄຳຮ້ອງທຸກ:**<br><br>• ໂຄງການ, ໂດຍຜ່ານພະແນກ ໂຍທາທິການ ແລະ ຂົນສົ່ງ (DWPTs) ໃນແຂວງ, ຈະຮັບປະກັນວ່າແຜນການຈັດຕັ້ງປະຕິບັດການຍົກຍ້າຍຈັດສັນ (RAPs) ປະກອບມີລາຍລະອຽດກ່ຽວກັບກົນໄກການແກ້ໄຂຂໍ້ຮ້ອງທຸກຂອງໂຄງການ (GRM), ເຊິ່ງຍັງຈະມີໃຫ້ໄດ້ຮັບຈາກນະໂຍບາຍການຍົກຍ້າຍຈັດສັນທີ່ກ່ຽວຂ້ອງ ຫຼື ຄຳຮ້ອງທຸກຂອງການຊົດເຊີຍ ແລະ ຄຳຄິດຄຳເຫັນ ກັບໂຄງການ. ໜ່ວຍງານຄຸ້ມຄອງໂຄງການ ຂອງກະຊວງ ຍທຂ (PMU of MPWT) ຈະຮັກສາລະບົບກົນໄກ (GRMs) ຂອງການດຳເນີນງານຕະຫຼອດຊ່ວງຂອງໂຄງການດັ່ງທີ່ໄດ້ລະບຸໄວ້ໃນຮ່າງກອບໜ້າວຽກນະໂຍບາຍ ການຍົກຍ້າຍຈັດສັນ (RPF). | ກ່ອນການເລີ່ມວຽກການກໍ່ສ້າງ ແລະ/ຫຼື ການຍຶດຄອງເອົາທີ່ດິນ ແລະ ຕະຫຼອດການປະຕິບັດຂອງໂຄງການ. | ກະຊວງ ໂຍທາທິການ ແລະ ຂົນສົ່ງ; ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ. |

| ESS 6: ການອະນຸລັກຊີວະນາໆພັນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຊີວິດ ແບບຍືນຍົງ | | | |
|---|---|---|---|
| 6.1 | **ຜົນກະທົບ ແລະ ຄວາມສ່ຽງ ທາງດ້ານຊີວະນາໆພັນ:**<br>• ກຳນົດ ແລະ ປະຕິບັດມາດຕະການເພື່ອແກ້ໄຂຄວາມສ່ຽງ ແລະ ຜົນກະທົບທາງດ້ານຊີວະນາໆພັນໂດຍອີງໃສ່ ຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF), ໃນໄລຍະ FS/ESIA. ຖ້າ ເໝາະສົມ, ແຜນການຄຸ້ມຄອງສະເພາະຂອງສະຖານທີ່ຈະຖືກກະກຽມເພື່ອຄຸ້ມຄອງຜົນກະທົບທີ່ລະບຸໄວ້ ເຊິ່ງຕ້ອງກະກຽມແຜນການຄຸ້ມຄອງຊີວະນາໆພັນສະເພາະ (BMP) ເປັນສ່ວນຫນຶ່ງຂອງ ESMPs ທີ່ກ່ຽວຂ້ອງ.<br>• ໂຄງການດັ່ງກ່າວຈະບໍ່ສະໜອງທຶນໃນການປັບປຸງເສັ້ນທາງທີ່ເຂົ້າເຖິງແຫຼ່ງທີ່ຢູ່ອາໄສທີ່ສຳຄັນເຊັ່ນ: ປ່າສະຫງວນ ແລະ ປ່າປ້ອງກັນ ຫຼື ອາດຈະເຮັດໃຫ້ເກີດການຕັດໄມ້ທຳລາຍປ່າ. ແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMPs) ສຳລັບເສັ້ນທາງ ກະຊວງ ຍທຂ (MPWT) ລວມມີການປະເມີນຜົນກະທົບຕໍ່ຊີວະນາໆພັນແລະພືດ, ຊຸມຊົນສັດ ແລະ ສະເຫນີມາດຕະການທີ່ເຫມາະສົມເພື່ອຫຼີກເວັ້ນ, ຫຼຸດຜ່ອນແລະ / ຫຼືຫຼຸດຜ່ອນຜົນກະທົບທີ່ອາດເກີດຂຶ້ນຈາກໂຄງການ. | ວຽກ FS/ESIA (ລວມທັງ ESMPs) ເລີ່ມແຕ່ຕົ້ນປີ 2022.<br><br>ESIA ຈະດຳເນີນການກວດກາກັ່ນກອງ ແລະປະເມີນຄວາມສ່ຽງດ້ານຊີວະນາໆພັນ ແລະ ESMPs ແລະ/ຫຼື BMPs ກະກຽມຕາມຄວາມຕ້ອງການ. ໂຄງການຍ່ອຍທີ່ກະກຽມຫຼັງຈາກຂັ້ນຕອນຂອງ ESIA ຄວນປະຕິບັດຕາມການກວດກາກັ່ນກອງ ແລະ ມາດຕະການອື່ນໆຕາມລາຍລະອຽດ ໃນ ESMF.<br><br>ຕະຫຼອດການຈັດຕັ້ງປະຕິບັດໂຄງການ | ກະຊວງ ຍທຂ<br><br>MPWT |

| ESS 7: ມາດຕະຖານ ການຄຸ້ມຄອງກຸ່ມຊົນເຜົ່າ [ເບິ່ງຕົວຢ່າງຂອງການປະຕິບັດທີ່ເປັນໄປໄດ້ຕາມຂ້າງລຸ່ມນີ້, ກໍານົດວ່າ ESS 7 ມີຄວາມກ່ຽວຂ້ອງ]. | | | |
|---|---|---|---|
| **7.1** | **ກອບໜ້າວຽກການຄຸ້ມຄອງກຸ່ມຊົນເຜົ່າ:**<br><br>• ອີງໃສ່ ຮ່າງກອບໜ້າວຽກການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEF), ຜົນການປະເມີນວ່າມີ ກຸ່ມຊົນເຜົ່າອາໄສ ຢູ່ໃນຂອບເຂດພື້ນທີ່ໂຄງການ ໂດຍໃຫ້ສອດຄ່ອງກັບ (ESS 7). ອີງຕາມຄວາມຈໍາເປັນ, ກະກຽມ, ຮັບຮອງເອົາ ແລະ ຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງກຸ່ມຊົນເຜົ່າ (EGEP) ທີ່ສອດຄ່ອງກັບເງື່ອນໄຂທີ່ໄດ້ກໍານົດໄວ້ໃນ (EGEF) ທີ່ຮັບຮອງໂດຍ ທະນາຄານໂລກ. | EGEF ໄດ້ກະກຽມ ແລະ ເຜີຍແຜ່ຂໍ້ມູນກ່ອນ ປິດການປະເມີນລາຄາຂອງໂຄງການ.<br><br>ວຽກງານ FS/ESIA ເລີ່ມແຕ່ຕົ້ນປີ 2022. ESIA ຈະດໍາເນີນການກວດກາກັ່ນກອງ ກຸ່ມຊົນເຜົ່າ ໃນໂຄງການຍ່ອຍ ແລະກະກຽມ EGEPs ຕາມຄວາມຕ້ອງການ. ໂຄງການຍ່ອຍທີ່ກະກຽມຫຼັງຈາກຂັ້ນ ຕອນຂອງ ESIA ຄວນປະຕິບັດຕາມການກວດກາກັ່ນ ກອງ ແລະ ມາດຕະການອື່ນໆ ຕາມລາຍລະອຽດໃນ EGEF. ການຈັດຕັ້ງປະຕິບັດ EGEF ຕະຫຼອດການຈັດຕັ້ງປະຕິບັດໂຄງ ການ. ຖ້າພົບເຫັນກຸ່ມຊົນເຜົ່າ ສອດຄ່ອງກັບ ESS7, ຕ້ອງກະກຽມ EGEP ໃນລະຫວ່າງການຈັດຕັ້ງປະຕິບັດໂຄງ ການ | ກະຊວງ ຍທຂ<br><br>MPWT |

| | | | |
|---|---|---|---|
| **7.2** | **ກົນໄກການແກ້ໄຂຄຳຮ້ອງທຸກ:**<br><br>• ກະກຽມ, ປຶກສາ, ຮັບຮອງເອົາ, ແລະ ປະຕິບັດການຈັດການຂອງກົນໄກການແກ້ໄຂຄຳຮ້ອງທຸກສຳລັບກຸ່ມຊົນເຜົ່າ, ຕາມຄວາມຕ້ອງການພາຍໃຕ້ EGEF ແລະອະທິບາຍຕື່ມອີກກ່ຽວກັບການຈັດການດັ່ງກ່າວໃນ EGEPs ທີ່ກ່ຽວຂ້ອງ (ຖ້າກົນໄກການຮ້ອງທຸກແມ່ນແຕກຕ່າງຈາກອັນທີ່ສ້າງຕັ້ງຂຶ້ນພາຍໃຕ້ ESS 10).<br><br>• ຄະນະກຳມະການແກ້ໄຂຄຳຮ້ອງທຸກ (GRC) ທີ່ຖືກສ້າງຕັ້ງຂຶ້ນສຳລັບແຕ່ລະອົງປະກອບຈະຮັບປະກັນມີຕົວແທນຂອງແມ່ຍິງໂດຍການຈັດສັນສະມາຊິກແມ່ຍິງຢ່າງໜ້ອຍ 1-2 ຄົນ ສຳລັບຕຳແໜ່ງຄະນະກຳມະການ. | ກ່ອນທີ່ຈະເລີ່ມຕົ້ນກິດຈະກຳຂອງໂຄງການ<br><br>ຮັກສາລະບົບຕະຫຼອດການຈັດຕັ້ງປະຕິບັດໂຄງການ | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະປ່າໄມ້, ກະຊວງອຸດສາຫະກຳແລະ ການຄ້າ, ກະຊວງແຜນການ ແລະການລົງທຶນ,<br><br>ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ |
| **ESS 10: ມາດຕະຖານການເຜີຍແຜ່ຂໍ້ມູນ ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.** | | | |
| **10.1** | **ການຈັດຕັ້ງປະຕິບັດ ແລະ ການກະກຽມແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.**<br><br>• ປັບປຸງ, ຮັບຮອງເອົາ, ແລະ ປະຕິບັດແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ (SEP). | ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ ຕ້ອງກະກຽມ ແລະເຜີຍແຜ່ຂໍ້ມູນ ກ່ອນ ປິດການປະເມີນລາຄາຂອງ ໂຄງການ.<br><br>ຈັດຕັ້ງປະຕິບັດຕະຫຼອດການຈັດຕັ້ງປະຕິບັດໂຄງການ | ກະຊວງ ຍທຂ<br><br>MPWT |

| | | | |
|---|---|---|---|
| 10.2 | **ກົນໄກການແກ້ໄຂຄຳຮ້ອງທຸກ ຂອງໂຄງການ:**<br><br>• ໂຄງການຈະຮັບປະກັນວ່າການຈັດການກ່ຽວກັບກົນໄກການແກ້ໄຂຄຳຮ້ອງທຸກ (GRMs) ທີ່ກວມເອົາທຸກໂຄງການຍ່ອຍຕາມທີ່ໄດ້ອະທິບາຍໄວ້ໃນ ESMF, SEP, RPF, EGEF ແລະ LMP ໄດ້ຖືກຈັດຕັ້ງປະຕິບັດສຳລັບທຸກອົງປະກອບຂອງໂຄງການ. ນອກຈາກນັ້ນ, ລັດຖະບານ ສປປ ລາວ ຍັງຈະສ້າງແຜນການປະສານງານ, ສື່ສານສຳລັບກົນໄກການແກ້ໄຂຄຳຮ້ອງທຸກເພື່ອຮັບປະກັນວ່າ ຜູ້ໄດ້ຮັບຜົນກະທົບ ຈາກໂຄງການ (PAPs) ແລະ ຊຸມຊົນ ໃນຂອບເຂດໂຄງການໄດ້ຮັບຮູ້ໄດ້ເຖິງເງື່ອນໄຂທີ່ມີຢູ່ແລ້ວ ແລະ ຂະບວນການສົ່ງຄຳຮ້ອງທຸກຕໍ່ກົນໄກການຮ້ອງທຸກດັ່ງກ່າວ. | ກ່ອນທີ່ຈະເລີ່ມຕົ້ນກິດຈະກຳຂອງໂຄງການ.<br><br>ຮັກສາລະບົບຕະຫຼອດການຈັດຕັ້ງປະຕິບັດໂຄງການ | ກະຊວງ ໂຍທາທິການ ແລະ ຂົນສົ່ງ, ກະຊວງກະສິກຳ ແລະປ່າໄມ້, ກະຊວງອຸດສາຫະກຳແລະ ການຄ້າ, ກະຊວງແຜນການ ແລະການລົງທຶນ,<br><br>ແລະ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ |
| 10.3 | **ແຜນການສື່ສານ:**<br><br>• ໂຄງການຈະພັດທະນາ ແລະ ເຜີຍແຜ່ຂໍ້ມູນ ຂອງເຄື່ອງມື ວຽກສິ່ງແວດລ້ອມ ແລະ ສັງຄົມ (E&S) ທັງໝົດ ແລະ ຂະບວນການຈັດການຄຳຮ້ອງທຸກ/ຄຳຄິດເຫັນຂອງໂຄງການ ສຳລັບຜູ້ໄດ້ຮັບຜົນກະທົບຂອງໂຄງການທີ່ຮັບປະກັນຄວາມໂປ່ງໃສ, ຄຳຕິຊົມທັນທີທັນໃດ ແລະ ການເຂົ້າເຖິງໄດ້ໂດຍບໍ່ມີຜົນກະທົບຕໍ່ຄ່າໃຊ້ຈ່າຍຕາມຄວາມຕ້ອງການຂອງ (ESS10) ແລະໄດ້ລະບຸໄວ້ໃນ SEP, ESMF, LMP; EGEF ແລະ RPF. | ກ່ອນທີ່ຈະເລີ່ມຕົ້ນກິດຈະກຳຂອງໂຄງການ. | ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ<br><br>ແລະ<br><br>ກະຊວງໂຍທາທິການ ແລະ ຂົນສົ່ງ<br><br>(PTRI and MPWT) |
| **ການຊ່ວຍເຫຼືອດ້ານຄວາມສາມາດ (ການຝຶກອົບຮົມ)** | | | |

| | | | |
|---|---|---|---|
| **CS1** | ບາງການຝຶກອົບຮົມຫຼັກ, ແຕ່ບໍ່ຈຳກັດ, ຈະໄດ້ຮັບການສະຫນອງໃຫ້:<br>• ຈັດຕັ້ງປະຕິບັດການສ້າງຂີດຄວາມສາມາດທີ່ລະບຸໄວ້ໃນພາກ 6.10 ຂອງ ຮ່າງກອບໜ້າວຽກການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF).<br>• ພະນັກງານໜ່ວຍງານຄຸ້ມຄອງອົງປະກອບ (CMU) ໃນຂັ້ນສູນກາງ ແລະ ແຂວງ (ແລະ ທີ່ປຶກສາດ້ານການ ສະຫນັບສະຫນູນການຈັດຕັ້ງປະຕິບັດ) ແລະ ພະແນກຄົ້ນຄວ້າສິ່ງແວດລ້ອມ ແລະ ປ້ອງກັນໄພພິບັດ, ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ (EDPD/PTRI) ຂອງກະຊວງ ຍທຂ (MPWT) -ທີ່ຈະສະໜອງໃຫ້ໂດຍທີ່ຊ່ຽວຊານປຶກສາດ້ານສິ່ງແວດລ້ອມ ແລະ ສັງຄົມ (E&S): ຄວາມຕ້ອງການພື້ນຖານຂອງ ຮ່າງກອບໜ້າວຽກສິ່ງແວດລ້ອມ ແລະ ສັງຄົມ (ESF) ແລະ ບັນດາມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESSs), ລວມທັງຂໍ້ກຳນົດສະເພາະຂອງ ESMPs, RPF, ESMF, EGEF, RAP, ESHS, EGEP, LMP, OHS, VAC, SEP ແລະ GRM.<br>• ຜູ້ຮັບເໝົາການກໍ່ສ້າງ, ຜູ້ຮັບເໝົາຍ່ອຍ ແລະ ຜູ້ຄຸມສະໜາມການກໍ່ສ້າງ / ວິສະວະກອນຂອງຜູ້ຮັບເໝົາ/ຜູ້ຮັບເໝົາຍ່ອຍ ແລະ ບໍລິສັດທີ່ປຶກສາສະໜັບສະໜູນການຈັດຕັ້ງປະຕິບັດ. ການຝຶກອົບຮົມໃຫ້ໂດຍຜູ້ປະສານງານວຽກສິ່ງແວດລ້ອມ ແລະ ສັງຄົມ (E&S) ຂອງກະຊວງ ຍທຂ (MPWT), ກ່ຽວກັບຄວາມຕ້ອງການຮ່າງກອບໜ້າວຽກສິ່ງແວດລ້ອມ ແລະ ສັງຄົມ (ESF) ແລະ ບັນດາມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມ (ESSs) ກ່ຽວກັບຄວາມສ່ຽງຂອງສິ່ງແວດລ້ອມ ແລະ ສັງຄົມ (E&S) ໃນລະດັບຜູ້ຮັບເຫມົາການກໍ່ສ້າງ, ຜູ້ຮັບເຫມົາຍ່ອຍ ແລະ ທີ່ປຶກສາການຊີ້ນໍາ, ລວມທັງ ESHS, OHS, RAP, EGEF, EGEP, LMP, SEA/SH , VAC, SEP ແລະ GRM.<br>• ຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍ, ກັບການກວດກາຂອງບໍລິສັດທີ່ປຶກສາ ແລະ ພະແນກ ຍທຂ ແຂວງ (DWPTs), ເພື່ອຮັບປະກັນຜູ້ອອກແຮງງານ, ກຳມະກອນທັງໝົດຂອງຜູ້ຮັບເໝົາ ແລະ ຜູ້ຮັບເໝົາຍ່ອຍ ລົງລາຍເຊັນຮັບຮູ້ ໃນລະບຽບການປະຕິບັດຕໍ່ຜູ້ຮັບເໝົາ ແລະ ໄດ້ຝຶກອົບຮົມກ່ຽວກັບຂໍ້ກຳນົດຂອງກົດລະບຽບການປະຕິບັດລວມທັງ ການປ້ອງກັນສຸຂະພາບ, ສິ່ງແວດລ້ອມ ແລະ ສັງຄົມ (ESHS), ການປ້ອງກັນສຸຂະພາບ ແລະ ການເຮັດວຽກ (OHS), ຄວາມຮຸນແຮງທາງເພດ, ບົດບາດຍິງຊາຍ (GBV), ຄວາມສ່ຽງເພີ່ມຂຶ້ນຂອງການຂູດຮີດທາງເພດ, ບົດບາດ-ຍິງຊາຍ ແລະ ການລ່ວງລະເມີດທາງເພດ (SEA) ແລະ/ຫຼື ການເອົາປຽບທາງເພດ (SH), ຄວາມຮຸນແຮງຕໍ່ເດັກນ້ອຍ (VAC), ແຜນການຄຸ້ມຄອງແຮງງານ (LMP), ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (SEP) ແລະ ກົນໄກແກ້ໄຂຄຳຮ້ອງທຸກ (GRM). | ຫົກເດືອນ ຫຼັງຈາກປະສິດທິຜົນການຈັດຕັ້ງປະຕິບັດ ແລະ ນໍາໃຊ້ງົບປະມານຂອງໂຄງການ<br>ຢ່າງຫນ້ອຍຫນຶ່ງເດືອນກ່ອນທີ່ຈະເລີ່ມຕົ້ນການເຮັດວຽກຂອງວຽກເຕັກນິກການກໍ່ສ້າງ.<br>ຢ່າງຫນ້ອຍຫນຶ່ງເດືອນກ່ອນທີ່ຈະເລີ່ມຕົ້ນການເຮັດວຽກຂອງວຽກເຕັກນິກການກໍ່ສ້າງ.<br>ຢ່າງໜ້ອຍໜຶ່ງເດືອນກ່ອນທີ່ຈະເລີ່ມວຽກງານເຕັກນິກການກໍ່ສ້າງ ແລະ<br>ຕະຫຼອດການຈັດຕັ້ງປະຕິບັດວຽກງານທາງ. | ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ (PTRI) ຂອງກະຊວງ ຍທຂ (MPWT) ແລະ ວຽກສິ່ງແວດລ້ອມ ແລະ ສັງຄົມ(E&S) ທີ່ປຶກສາຈາກ ສະຖາບັນຄົ້ນຄວ້າໂຍທາທິການ ແລະ ຂົນສົ່ງ (PTRI).<br>ບັນດາຜູ້ຮັບເໝົາການກໍ່ສ້າງ<br>ຊ່ຽວຊານທີ່ປຶກສາການກໍ່ສ້າງ .<br>ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ (DPWTs) |